**Curriculum on Basic Skills in legal profession**
**for enforcement and court judgement (Laos)**

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

# Lecture 15
# Review lesson
# ທວນບົດຮຽນ

ສປປ ລາວ ຍຶດໝັ້ນ " ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນທຸກອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມແລະພົນລະເມືອງທຸກຄົນຕ້ອງເຄົາລົບ, ບຸກຄົນ ແລະ ອົງການຈັດຕັ້ງທີ່ມີສ່ວນກ່ຽວຂ້ອງຕ້ອງປະຕິບັດຢ່າງເຂັ້ມງວດ"[1].

## 1. ລະບົບອົງການຄຸ້ມຄອງ ແລະ ອົງການປະຕິບັດຄຳຕັດສິນຂອງສານ

ສປປ ລາວ ມີລະບົບການປະຕິບັດຄຳຕັດສິນຂອງສານ ເປັນອົງການຈັດຕັ້ງຂອງລັດຖະບານ ໂດຍແມ່ນກະຊວງຍຸຕິທຳເປັນຜູ້ຄຸ້ມຄອງ ແລະ ມີຫ້ອງການ, ໜ່ວຍງານປະຕິບັດຄຳຕັດສິນຂອງສານເປັນຜູ້ຈັດຕັ້ງປະຕິບັດ, ສ່ວນທະຫານກໍຈະມີລະບົບການປະຕິບັດຄຳຕັດສິນຂອງສານຕາງຫາກ, ໃນບົດຮຽນທີ່ນຳສະເໜີນີ້ ໄດ້ສະເໜີສະເພາະລະບົບການປະຕິບັດຄຳຕັດສິນຂອງສານທີ່ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງລັດຖະບານ.

**ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ຢູ່ ສປປ ລາວ ປະກອບມີ:**

- ຂັ້ນສູນກາງ: ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ຊຶ່ງແມ່ນກົມໜຶ່ງທີ່ຂຶ້ນກັບກະຊວງຍຸຕິທຳ;
- ຂັ້ນແຂວງ: ພະແນກຍຸຕິທຳແຂວງ, ນະຄອນຫຼວງ;
- ຂັ້ນເມືອງ: ຫ້ອງການຍຸຕິທຳເມືອງ.

**ອົງການປະຕິບັດຄຳຕັດສິນຂອງສານ ຢູ່ ສປປ ລາວ ປະກອບມີ:**

- **ຂັ້ນແຂວງ:**ຫ້ອງການປະຕິບັດຄຳຕັດສິນແຂວງ, ນະຄອນຫຼວງວຽງຈັນ;
- **ຂັ້ນເມືອງ:** ໜ່ວຍງານປະຕິບັດຄຳຕັດສິນຂອງສານເມືອງ.

## 2. ພາລະບົດບາດຂອງອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ

ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານມີພາລະບົດບາດໃນການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານຕາມຂອບເຂດສິດ, ອຳນາດຂອງຕົນໃນການຊີ້ນຳ ແລະ ຄຸ້ມຄອງອົງການປະຕິບັດຄຳຕັດສິນຂອງສານທາງດ້ານວິຊາ

[1] ທ່ານ ບຸນທາ ຊິງເຢີທ່າວ, ບົດວິທະຍານິພົນທິດສະດີການເມືອງ ແລະ ການປົກຄອງ ລະບົບຊັ້ນສູງ ສົກສຶກສາ, ປີ 2014, ໜ້າ 1.

ການ, ການເມືອງ-ແນວຄິດ,ການຈັດຕັ້ງ ແລະ ລະບອບແບບແຜນວິທີເຮັດວຽກໃຫ້ມີຄວາມເປັນເອກະພາບ, ວ່ອງໄວ, ຖືກຕ້ອງ, ໂປ່ງໃສ ແລະ ຍຸຕິທຳບົນຫຼັກການ ແລະ ລະບຽບການກ່ຽວກັບການປະຕິບັດຄຳຕັດສິນຂອງສານ.

### 3. ພາລະບົດບາດອົງການປະຕິບັດຄຳຕັດສິນຂອງສານ

ອົງການປະຕິບັດຄຳຕັດສິນຂອງສານແມ່ນຈັດຕັ້ງຈຸລະພາກ ມີພາລະ ບົດບາດປະຕິບັດຄຳຕັດສິນຂອງສານ ແລະ ນິຕິກຳອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 (ໃໝ່) ຂອງກົດໝາຍວ່າ ດ້ວຍການປະຕິບັດຄຳຕັດສິນຂອງສານ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

### 4. ໂຄງປະກອບບຸກຄະລາກອນ

ບຸກຄະລາກອນຂອງກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ປະກອບມີ: ຫົວໜ້າກົມ 01 ທ່ານ, ຮອງຫົວໜ້າກົມຈຳນວນໜຶ່ງ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ວິຊາການ ຈຳນວນໜຶ່ງ[2].

ບຸກຄະລາກອນຂອງຫ້ອງການປະຕິບັດຄຳຕັດສິນຂອງສານແມ່ນບຸກຄະລາກອນຂອງພະແນກຍຸຕິທຳແຂວງ, ນະຄອນຫຼວງ ຊຶ່ງປະກອບດ້ວຍ: ຫົວໜ້າຫ້ອງການປະຕິບັດຄຳຕັດສິນຂອງສານ; ຮອງຫົວໜ້າຫ້ອງກາປະຕິບັດຄຳຕັດສິນຂອງສານ; ພະນັກງານປະຕິບັດຄຳຕັດສິນຂອງສານ, ວິຊາການ ແລະ ພະນັກງານບໍລິຫານຈຳນວນໜຶ່ງ[3].

ບຸກຄະລາກອນຂອງໜ່ວຍງານປະຕິບັດຄຳຕັດສິນຂອງສານແມ່ນບຸກຄະລາກອນຂອງຫ້ອງການຍຸຕິທຳເມືອງ, ເທດສະບານ, ນະຄອນ ຊຶ່ງປະກອບດ້ວຍ: ຫົວໜ້າໜ່ວຍງານ; ຮອງຫົວໜ້າໜ່ວຍງານ; ພະນັກງານປະຕິບັດຄຳຕັດສິນຂອງສານ, ວິຊາການ ແລະ ພະນັກງານບໍລິຫານຈຳນວນໜຶ່ງ[4].

### 5. ນະໂຍບາຍລວມຂອງລັດຕໍ່ວຽກງານປະຕິບັດຄຳຕັດສິນຂອງສານ

ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ມີບົດບາດໃນການຮັບປະກັນຄວາມຍຸຕິທຳ ທີ່ໄດ້ກຳນົດອອກໃນຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ວຽກງານດັ່ງກ່າວນີ້ ລັດແຫ່ງ ສປປ ລາວ ໄດ້ກຳນົດນະໂຍບາຍລວມໂດຍຜ່ານການເອົາໃຈໃສ່ສ້າງຕັ້ງ ແລະ ປັບປຸງອົງການທີ່ມີໜ້າທີ່ຮັບຜິດຊອບຢ່າງຕັ້ງໜ້າຕະຫຼອດມາ.

ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ສ້າງຂຶ້ນໂດຍລັດຖະບານ: ໄດ້ກຳນົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານທາງແພ່ງ;ກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແຕ່ສູນກາງລົງຮອດທ້ອງຖິ່ນ ລວມທັງສິດ ແລະ ໜ້າທີ່ຂອງພະນັກງານປະຕິບັດຄຳຕັດສິນຂອງສານ ແນໃສ່ເຮັດໃຫ້ຄຳຕັດສິນຂອງສານໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ຖືກຕ້ອງ, ວ່ອງໄວ ແລະ ເປັນເອກະພາບໃນທົ່ວປະເທດ; ເພີ່ມທະວີຄວາມສັກສິດຂອງອຳນາດລັດ ແລະ ຂອງກົດໝາຍ; ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ສິດ ແລະ ຜົນປະໂຫຍດ

---

[2] ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 462/ກຍ, ລົງວັນທີ 09 ພຶດສະພາ 2017 ວ່າດ້ວຍການ ແລະ ການເຄື່ອນໄຫວ ຂອງກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ, ໜ້າທີ 3

[3] ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008, ມາດຕາ 15

[4] ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008, ມາດຕາ 18

ອັນຊອບທຳຂອງລວມມໝູ່ ແລະ ພົນລະເມືອງ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມຍຸຕິທຳ[5].

### 6. ນະໂຍບາຍຂອງລັດຕໍ່ວຽກງານປະຕິບັດຂອງສານ

ລັດສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການປະຕິບັດຄຳຕັດສິນຂອງສານ ດ້ວຍການວາງນະໂຍບາຍ, ກຳນົດລະບຽບການ, ສະໜອງງົບປະມານ, ປະກອບບຸກຄະລາກອນ, ພາຫະນະ ແລະ ອຸປະກອນຮັບໃຊ້ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມວ່ອງໄວ, ຖືກຕ້ອງ ແລະ ເປັນທຳ.

ລັດສົ່ງເສີມການໂຄສະນາ, ສຶກສາອົບຮົມ ໃຫ້ພົນລະເມືອງບັນດາເຜົ່າ, ການຈັດຕັ້ງຂອງລັດ, ຂອງສັງຄົມ, ວິສາຫະກິດ ຮັບຮູ້, ເຂົ້າໃຈ ແລະ ໃຫ້ການຮ່ວມມືໃນການປະຕິບັດຄຳຕັດສິນຂອງສານ.

ລັດຍັງໄດ້ມີນະໂຍບາຍ ແລະ ໄດ້ມີການໃຫ້ສິດຕໍ່ກະຊວງຍຸຕິທຳໃນການປັບປຸງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອຍົກໃຫ້ເຫັນບົດບາດ, ຄວາມສຳຄັນຂອງກະຊວງຍຸຕິທຳຕໍ່ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ທັງເປັນການກວດກາຄືນກ່ຽວກັບສະພາບຈຸດພິເສດ,ດ້ານດີທີ່ຕັ້ງໜ້າ ແລະ ດ້ານອ່ອນທີ່ຍັງຄົງຄ້າງໃນໄລຍະຜ່ານມາທີ່ຕ້ອງໄດ້ປັບປຸງໃຫ້ດີຂຶ້ນ.

### 7. ດ້ານກົດໝາຍ ແລະ ລະບຽບການ

ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແມ່ນໜຶ່ງໃນລະບົບນິຕິກຳທີ່ມີຜົນບັງຄັບທົ່ວໄປຊຶ່ງກຳນົດຫຼັກການ, ລະບຽບການ, ວິທີການແລະມາດຕະການກ່ຽວກັບການປະຕິບັດຄຳຕັດສິນຂອງສານທາງແພ່ງ; ກຳນົດທີ່ຕັ້ງ, ພາລະບົດບາດ, ສິດແລະໜ້າທີ່ຂອງອົງການຄຸ້ມຄອງແລະອົງການປະຕິບັດຄຳຕັດສິນຂອງສານແຕ່ສູນກາງລົງຮອດທ້ອງຖິ່ນລວມທັງສິດ ແລະໜ້າທີ່ຂອງພະນັກງານປະຕິບັດຄຳຕັດສິນຂອງສານແນໃສ່ເຮັດໃຫ້ຄຳຕັດສິນຂອງສານໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ຖືກຕ້ອງ, ວ່ອງໄວແລະເປັນເອກພາບໃນທົ່ວປະເທດ; ເພີ່ມທະວີຄວາມສັກສິດຂອງອຳນາດລັດແລະຂອງກົດໝາຍ; ປົກປ້ອງສິດແລະຜົນປະໂຫຍດຂອງລັດ, ສິດແລະຜົນປະໂຫຍດອັນຊອບທຳຂອງລວມໝູ່ແລະຂອງພົນລະເມືອງ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍແລະມີຄວາມຍຸຕິທຳ. ພ້ອມກັນນີ້, ກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານກໍໄດ້ມອບຄວາມຮັບຜິດຊອບໃຫ້ກະຊວງຍຸຕິທຳເປັນຜູ້ປະຕິບັດຄຳຕັດສິນຂອງສານທາງແພ່ງຊຶ່ງກະຊວງຍຸຕິທຳກໍແມ່ນອົງການຈັດຕັ້ງໜຶ່ງຊຶ່ງເປັນອົງການຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນ.

ນອກຈາກອີງໃສ່ກົດໝາຍທີ່ກ່ຽວຂ້ອງແລ້ວ, ວຽກງານປະຕິບັດຄຳຕັດສິນຂອງສານ ຢູ່ແຕ່ລະຂັ້ນແຕ່ລະທ້ອງຖິ່ນຕ້ອງໄດ້ເອົາໃຈໃສ່ເປັນພິເສດຕໍ່ກັບຄຸນສົມບັດຈັນຍາບັນຂອງພະນັກງານປະຕິບັດຄຳຕັດສິນຂອງສານ, ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ແລະ ກໍ່ສ້າງບຳລຸງຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານໃນອົງການຄຸ້ມຄອງ ແລະ ອົງການປະຕິບັດຄຳຕັດສິນຂອງສານຢ່າງເປັນລະບົບຕໍ່ເນື່ອງ.

---

[5] ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008, ມາດຕາ 1.

## 8. ການປະຕິບັດຄຳຕັດສິນຂອງສານ

ການປະຕິບັດຄຳຕັດສິນຂອງສານ ແມ່ນວຽກງານສຸດທ້າຍຂອງການດຳເນີນຄະດີຕາມຂະບວນຍຸຕິທຳ ໂດຍມີອົງການຄຸ້ມຄອງ ແລະ ອົງການປະຕິບັດຄຳຕັດສິນຂອງສານ ຮັບຜິດຊອບໃນການຈັດຕັ້ງ ແລະ ການເຄື່ອນໄຫວໃຫ້ເປັນໄປຕາມກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ວຽກງານດັ່ງກ່າວເປັນວຽກງານທີ່ລະອຽດອ່ອນ, ເຂັ້ມງວດ ແລະ ເດັດຂາດ, ມີຄວາມຈຳເປັນຕ້ອງເຂົ້າໃຈໃຫ້ເລິກເຊິ່ງໃນທາງກ້ວາງ ແລະ ທາງເລິກຕາມທິດສະດີການເມືອງ ແລະ ທິດສະດີທາງກົດໝາຍ

ການປະຕິບັດຄຳຕັດສິນຂອງສານ ແມ່ນ ການນຳເອົາຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ນິຕິກຳອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 (ໃໝ່) ຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ ປີ 2008) ມາປະຕິບັດໃຫ້ຖືກຕ້ອງ ແລະ ປາກົດຜົນເປັນຈິງ ເພື່ອຟື້ນຟູສິດ ແລະຜົນປະໂຫຍດຂອງລັດ, ລວມໝູ່ ແລະ ພົນລະເມືອງ ທີ່ຖືກລະເມີດ ຫຼື ສູນເສຍໄປ[6].

## 9. ຈັນຍາບັນ

ຈັນຍາບັນ ແມ່ນການປະພຶດທີ່ດີຂອງຄົນເຮົາ ຊຶ່ງສະແດງເຖິງຄວາມຮັກ ແລະ ເຂົ້າລືບວິຊາສະເພາະຂອງຕົນ ຫຼື ອົງການ, ສະຖາບັນບ່ອນທີ່ຕົນເຮັດວຽກ ຫຼື ສັງກັດຢູ່ ເຊັ່ນ: ຢູ່ໃນສັງຄົມ ມັກຈະປາກົດເຫັນເລື້ອຍໆ ວ່າມີຄົນຈຳນວນໜຶ່ງປະພຶດຕົນໄປໃນທາງທີ່ບໍ່ດີ, ລະເມີດລະບຽບກົດໝາຍ, ສະແຫວງຫາຜົນປະໂຫຍດໂດຍບໍ່ຊອບທຳ, ເຮັດໃຫ້ເສຍຊື່ສຽງຂອງຜູ້ກ່ຽວ ແລະ ສະຖາບັນຜູ້ກ່ຽວສັງກັດ, ການກະທຳດັ່ງກ່າວນີ້ເອງທີ່ເອີ້ນວ່າ ຂາດຈັນຍາບັນ ຫຼື ຄົນບໍ່ມີຈັນຍາບັນ.

## 10. ຈັນບັນຂອງພະນັກງານປະຕິບັດຄຳຕັດສິນຂອງສານ

ຈັນຍາບັນວິຊາຊີບປະຕິບັດຄຳຕັດສິນຂອງສານ ແມ່ນຫຼັກການປະພຶດຂອງພະນັກງານປະຕິບັດຄຳຕັດສິນຂອງສານ ທີ່ສະແດງໃຫ້ເຫັນເຖິງຄວາມຮັກ ແລະ ເຂົ້າລືບວິຊາຊີບປະຕິບັດຄຳຕັດສິນຂອງສານ ເພື່ອຮັກສາ ແລະ ສົ່ງເສີມກຽດສັກສີ, ຊື່ສຽງ ແລະ ຖານະຂອງວິຊາຊີບປະຕິບັດຄຳຕັດສິນຂອງສານ.

ຈັນຍາບັນວິຊາຊີບປະຕິບັດຄຳຕັດສິນຂອງສານ ເປັນຫຼັກເກນທີ່ເວົ້າເຖິງ ການປະຕິບັດໜ້າທີ່ໃນວິຊາຊີບທີ່ດີ ແລະ ການວາງຕົວຢູ່ໃນສັງຄົມທີ່ດີ ຂອງນັກວິຊາຊີບປະຕິບັດຄຳຕັດສິນຂອງສານ. ຊຶ່ງຈັນຍາບັນວິຊາຊີບດັ່ງກ່າວນີ້ ເປັນເລື່ອງທີ່ສຳຄັນທີ່ສຸດເລື່ອງໜຶ່ງທີ່ຕ້ອງຮຽນຮູ້ ແລະ ປະຕິບັດ.

ໃນການປະຕິບັດຄຳຕັດສິນຂອງສານ ຈັນຍາບັນເປັນສິ່ງທີ່ເຮັດໃຫ້ເກີດຄວາມຖືກຕ້ອງ, ເປັນທຳຢູ່ໃນສັງຄົມ, ເຮັດໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານ ສາມາດປະກອບອາຊີບໄດ້ດີທີ່ສຸດ ແລະ ສາມາດຮັກສາກຽດຕິຍົດຂອງວິຊາຊີບໄວ້ໄດ້ອີກດ້ວຍ, ສະຫຼຸບແລ້ວຈັນຍາບັນຂອງວິຊາຊີບປະຕິບັດຄຳຕັດສິນຂອງສານ ມີຄວາມສຳຄັນຢູ່ສອງສ່ວນດ້ວຍກັນ ຄື: ການປະຕິບັດໜ້າທີ່ໃນວິຊາຊີບທີ່ດີ ແລະ ການວາງຕົວຢູ່ໃນສັງຄົມທີ່ດີ ຂອງນັກວິຊາຊີບປະຕິບັດຄຳຕັດສິນຂອງສານ.

---

[6] ກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 4/ສພຊ, ລົງວັນທີ 25 ກໍລະກົດ 2008, ມາດຕາ 2

**11. ຈັນຍາບັນຂອງຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ**

ຈັນຍາບັນຂອງຜູ້ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ ໝາຍເຖິງລະບຽບການທີ່ອົງການປະຕິບັດຄຳຕັດສິນຂອງສານ ກຳນົດຂຶ້ນກ່ຽວກັບການປະຕິບັດຂອງຜູ່ເຂົ້າຮ່ວມປະຕິບັດຄຳຕັດສິນຂອງສານ ເພື່ອໃຫ້ວຽກງານປະຕິບັດຄຳຕັດສິນຂອງສານດຳເນີນໄປຢ່າງເປັນລະບຽບຮຽບຮ້ອຍ, ວອງໄວ ແລະ ທັນກັບກຳນົດເວລາໃນການປະຕິບັດຄຳຕັດສິນຂອງສານ. ຊຶ່ງຜູ້ເຂົ້າຮ່ວໃນປະຕິບັດຄຳຕັດສິນຂອງສານບໍ່ວ່າຈະເປັນບຸກຄົນ ຫຼື ການຈັດຕັ້ງຄວນຈະຕ້ອງຫຼີກລ້ຽງຈາກຂໍ້ຫ້າມ ຕາມທີ່ກຳນົດໄວ້ໃນກົດໝາຍກໍຖືວ່າມີຈັນບັນ.

**12. ການຮ່ວມມືສາກົນໃນການປະຕິບັດຄຳຕັດສິນຂອງສານ ຂອງ ສປປ ລາວ**

ການຮ່ວມມືສາກົນໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານແມ່ນການນຳເອົາຜົນຂອງການໄກ່ເກັ່ຍ, ຄຳຕັດສິນ, ຄຳພິພາກສາຂອງສານຕ່າງປະເທດທີ່ຖືກຮັບຮູ້ຈາກສານປະຊາຊົນສູງສຸດຂອງ ສປປ ລາວ ມາຈັດຕັ້ງປະຕິບັດຕາມກົດໝາຍ ໂດຍສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

ຫຼັກການຮ່ວມມືສາກົນໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານລະຫວ່າງ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສປປ ລາວ  ກັບຕ່າງປະເທດຕ້ອງປະຕິບັດຕາມຫຼັກການເຄົາລົບເອກະລາດ, ອຳນາດອະທິປະໄຕ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ, ບໍ່ແຊກແຊງວຽກງານພາຍໃນຂອງກັນ ແລະ ກັນ, ສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ສອດຄ່ອງກັບສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ໃນກໍລະນີ ທີ່ບໍ່ມີສັນຍາ ແລະ ສົນທິສັນຍາສາກົນ ກັບຕ່າງປະເທດນັ້ນ ສປປ ລາວ ອາດຈະຮັບເອົາມາພິຈາລະນາບົນຫຼັກການຮ່ວມມືເຊິ່ງກັນ ແລະ ກັນ ແຕ່ບໍ່ໃຫ້ຂັດກັບລັດຖະທຳມະນູນ ແລະ ກົດໝາຍຂອງ ສປປ ລາວ.

**13. ເງື່ອນໄຂການຮັບຄຳຕັດສິນຂອງສານຕ່າງປະເທດ**

ການຮັບຄຳຕັດສິນຂອງສານຕ່າງປະເທດມາຈັດຕັ້ງປະຕິບັດ ແມ່ນປະຕິບັດຕາມເງື່ອນໄຂດັ່ງນີ້:

ຄຳຕັດສິນຂອງສານຕ່າງປະເທດທີ່ສົ່ງມາຫາກະຊວງຍຸຕິທຳ ໂດຍຜ່ານສະຖານທູດ, ກົງສູນ ຫຼື ອົງການຕາງໜ້າຂອງ ສປປ ລາວຢູ່ຕ່າງປະເທດກ່ຽວຂ້ອງນັ້ນ ແລະ ໄດ້ແປເປັນພາສາລາວແລ້ວ;

ບຸກຄົນ, ຄູ່ຄວາມ ຫຼື ການຈັດຕັ້ງກ່ຽວຂ້ອງ ທີ່ຕ້ອງການໃຫ້ປະຕິບັດຄຳຕັດສິນຂອງສານຕ່າງປະເທດຕ້ອງຂຽນຄຳຮ້ອງຂໍໃຫ້ຮັບຮູ້ ແລະ ໃຫ້ປະຕິບັດ ໄປຍັງສານປະຊາຊົນຂອງ ສປປ ລາວ ບ່ອນທີ່ມີສິດອຳນາດ ເພື່ອພິຈາລະນາຕັດສິນຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ ໂດຍຜ່ານກະຊວງການຕ່າງປະເທດ ສະເໜີມາຍັງກະຊວງຍຸຕິທຳ ເພື່ອຄົ້ນຄວ້າມີຄຳເຫັນ ແລ້ວຈຶ່ງສົ່ງໃຫ້ສານພິຈາລະນາຕາມລະບຽບການ.

ພາຍຫຼັງທີ່ສານປະຊາຊົນຂອງ ສປປ ລາວ ໄດ້ຕັດສິນຮັບຮູ້ ແລະ ໃຫ້ປະຕິບັດຄຳຕັດສິນຕ່າງປະເທດແລ້ວ ບຸກຄົນ, ຄູ່ຄວາມ ຫຼື ການຈັດຕັ້ງກ່ຽວຂ້ອງ ຕ້ອງປະກອບເອກະສານມາຍັງກະຊວງຍຸຕິທຳເພື່ອດຳເນີນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

**14. ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ**

ການກວດກາພາຍໃນ ໝາຍເຖິງການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ຂອງອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ, ຊຶ່ງປະກອບມີກະຊວງຍຸຕິທຳ,ພະແນກຍຸຕິທຳແຂວງ, ນະຄອນຫຼວງ,ຫ້ອງການຍຸຕິທຳເມືອງ, ນະຄອນ, ເທດສະບານ[7].

ການກວດກາພາຍນອກ ຫຼື ການຕິດຕາມກວດກາພາຍນອກ ໝາຍເຖິງການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ອົງການໄອຍະການປະຊາຊົນ ຕາມການກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

ການຕິດຕາມກວດກາວຽກປະຕິບັດຄຳຕັດສິນຂອງສານ ແມ່ນເຮັດແນວໃດໃຫ້ພະນັກງານຄຸ້ມຄອງ ແລະ ພະນັກງານປະຕິບັດຄຳຕັດສິນຂອງສານ ເຄື່ອນໄຫວວຽກງານຂອງຕົນຕາມພາລະບົດບາດ ແລະ ສອດຄ່ອງກັບກົດໝາຍ, ປະຕິບັດຄຳຕັດສິນຂອງສານ ໄປຕາມຂັ້ນຕອນທີ່ກຳນົດໄວ້ ບໍ່ມີການເຂົ້າຂ້າງອອກຂາ, ມີຄວາມສະເໝີພາບໃນການປະຕິບັດທຸກຄະດີ, ບໍ່ຂຶ້ນກັບມູນຄ່າຄະດີຈະໜ້ອຍ ຫຼື ຫຼາຍ ແລະ ບໍ່ຂຶ້ນກັບຖານະທາງດ້ານເສດຖະກິດ ຫຼື ຖານະທາງດ້ານສັງຄົມຂອງຄູ່ຄວາມ ໝາຍຄວາມວ່າທຸກຄະດີລ້ວນແຕ່ມີຄວາມສະເໝີພາບໃນການປະຕິບັດ ໃນເມື່ອຄຳຕັດສິນຂອງສານໃຊ້ໄດ້ເດັດຂາດແລ້ວ.

**References:**


1. ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015;
2. ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008;
3. ຄຳແນະນຳ ຂອງລັດຖະມົນຕີກະຊວງຍຕິທຳລາວ ສະບັບເລກທີ 445/ກຍ, ລົງວັນທີ 5 ເມສາ 2019 ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານຂອງ ສປປ ລາວ;
4. ທ່ານ ບຸນທາ ຊົງເຢີທ່າວ, ບົດວິທະຍານິພົນທິດສະດີການເມືອງ ແລະ ການປົກຄອງ ລະບົບຊັ້ນສູງປີ 2014;
5. ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 462/ກຍ, ລົງວັນທີ 09 ພຶດສະພາ 2017 ວ່າດ້ວຍການ ແລະການເຄື່ອນໄຫວຂອງກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ;
6. ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 1268/ກຍ, ລົງວັນທີ 16 ພະຈິກ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກຍຸຕິທຳແຂວງ, ນະຄອນຫຼວງ.
7. ປທ ປາດຖະໜາ ບຸນເພັງ, ບົດສອນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ປີ 2018.
8. ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ, ສະບັບເລກທີ 077/ກຍ, ລົງວັນທີ 22 ມັງກອນ 2018 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການຍຸຕິທຳເມືອງ, ເທດສະບານ, ນະຄອນ.


[7] ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ເລກທີ 04/ສພຊ ລົງວັນທີ 25 ກໍລະກົດ 2008, ມາດຕາ 45

9. ບົດລາຍງານຂອງລັດຖະມົນຕີກະຊວງຍຸຕິທຳກ່ຽວກັບວຽກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຕໍ່ກອງປະຊຸມສະໄໝສາມມັນເທື່ອທີ 4 ຂອງສະພາແຫ່ງຊາດ, ຊຸດທີ VIII (ຄັ້ງວັນທີ 25/10/2017), ໜ້າ 2,4;

10. ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ (2016-2020) ຄັ້ງທີ VIII ຂອງລັດຖະບານ.

11. ມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ ປີ 2011;

12. ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ເລກທີ 38/ນຍ, ລົງວັນທີ 6 ພະຈິກ 2006;

13. ບົດໂຄງການຈົບຊັ້ນຂອງນັກສຶກສາກົດໝາຍປະລິນຍາຕີ, ສະຖາບັນຍຸຕິທຳແຫ່ງຊາດ: ການປັບປຸງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສົກປີ 2012-2013 ໜ້າທີ 44-48.

14. ດຳລັດເລກທີ 158/ລບ, ລົງວັນທີ 4 ມິຖຸນາ 2013 ວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

15. ຄຳສັ່ງເລກທີ 38/ນຍ, ລົງວັນທີ 06/11/2006 ກ່ຽວກັບການປະຕິບັດຄຳຕັດສິນຂອງສານ

16. ທ່ານ ບຸນຕາ ສ.ພາບມີໄຊ, ປື້ມຄູ່ມືກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ປີ 2011;

17. ດຳລັດວ່າດ້ວຍ ຈັນຍາບັນຂອງພະນັກງານ-ລັດຖະກອນ, ສະບັບເລກທີ 184/ລບ ລົງວັນທີ 28 ມິຖຸນາ 2019;

18. ຄຳອະທິບາຍຫຼັກວິຊາຊີບນັກກົດໝາຍ, ຮຈ. ດິເຣກ ຄວນສະມາຄົມ, ຄະນະນິຕິສາດ ມະຫາວິທະຍາໄລພະຍັບ ຣາຊະອານາຈັກໄທ, ປີ 2014;

19. ທ່ານ ແສງພະຈັນ ວົງໂພທອງ, ປື້ມແບບຮຽນຫຼັກສູດຝຶກອົບຮົມວິຊາຊີບຍຸຕິທຳ ວິຊາຈັນຍາທຳຂອງວິຊາຊີບຍຸຕິທຳ, ສະຖາບັນຍຸຕິທຳແຫ່ງຊາດ, ປີ 2016;

20. ຣສ. ວຽງວິໄລ ທ່ຽງຈັນໄຊ, ຈັນຍບັນຂອງນັກກົດໝາຍ, ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດລາວ, ປີ 2015.

21. ຄຳແນະນຳຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 447/ກຍ, ລົງວັນທີ 05 ເມສາ 2019 ວ່າດ້ວຍການຕີລາຄາ, ການຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

22. ກົດໝາຍວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ສປປລາວ ປີ 2014.

23. ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012;

24. ສົນທິສັນຍານີວຢອກ 1958 ວ່າດ້ວຍການຮັບຮູ້ການຈັດຕັ້ງປະຕິບັດຄຳຕັດສິນຂອງຄະນະກຳມະການຕັດສິນຕ່າງປະເທດ.

25. ສົນທິສັນຍາຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານຍຸຕິທຳກ່ຽວກັບທາງແພ່ງ ແລະ ອາຍາ ລະຫວ່າງ ສປປ ລາວ ແລະ ຫວຽດນາມ,ວັນທີ 6/7/1998;

26. ຄຳແນະນຳຂອງລັດຖະມົນຕີກະຊວງຍຸຕິທຳ, ສະບັບເລກທີ 446/ກຍ, ລົງວັນທີ 5 ເມສາ 2019 ກ່ຽວກັບວຽກງານການເງິນ, ການຮັບ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

27. ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ) ເລກທີ 04/ສພຊ ລົງວັນທີ 9 ທັນວາ 2015;
28. ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ເລກທີ 21/ສພຊ ລົງວັນທີ 10 ພຶດສະພາ 2017;
29. ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 462/ກຍ, ລົງວັນທີ 09 ພຶດສະພາ 2017 ວ່າດ້ວຍການ ແລະການເຄື່ອນໄຫວຂອງກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ;
30. ໜັງສືແຈ້ງຕອບສະບັບເລກທີ 01/ອຍກນວ.ທປ ລົງວັນທີ 11 ກຸມພາ 2021 ຂອງຂະແໜງຕິດຕາມກວດກາທົ່ວໄປ, ອົງການໄອຍະການປະຊາຊົນນະຄອນຫຼວງ;
31. **ຕຳລາກໍ່ສ້າງວິຊາຊີບປະຕິບັດຄຳຕັດສິນຂອງສານ (ເຫຼັ້ມທີ 1 ພາກທັກສະພື້ນຖານ), ໂດຍສະຖາບັນຍຸຕິທຳແຫ່ງຊາດ.**